# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 7 ກຸມພາ 2010 (7-2-2010)

## ທ່ານມີຄວາມຄິດທີ່ຕ້ອງບໍ?

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 8:5-8; 1 ໂກຣິນໂທ 2:12-16; 2 ໂກຣິນໂທ 4:3-4

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ຈະຊ່ວຍໃຫ້ທ່ານເຫັນຄວາມແຕກຕ່າງຂອງສະພາບຈິດໃຈສອງຢ່າງທີ່ບໍ່ຄືກັນ ແລະ ຊັ່ງຊາເບິ່ງວ່າຕົນເອງມີຈິດໃຈຢູ່ໃນສະພາບໃດ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ຈະເວົ້າເຖິງກ່ຽວກັບສະພາບຈິດໃຈສອງຝ່າຍທີ່ບໍ່ກົງກັນຂອງຄົນທີ່ບໍ່ເຊື່ອແລະຄົນທີ່ມີຄວາມເຊື່ອ. ທ່ານຈະຮຽນຮູ້ວ່າເປັນຫຍັງຄົນທີ່ບໍ່ເຊື່ອແລະຄົນທີ່ມີຄວາມເຊື່ອຈຶ່ງມີຄວາມຄິດທີ່ບໍ່ກົງກັນ ແລະຄວາມແຕກຕ່າງຂອງຄວາມຄິດນີ້ມີຜົນສະທ້ອນຕໍ່ຊີວິດແບບໃດ.

### ຄວາມສຳຄັນຂອງບົດຮຽນ

ບົດຮຽນນີ້ສຳຄັນຫລາຍເພາະວ່າຄວາມນຶກຄິດຈິດໃຈຂອງຄົນໃນວັທນະທັມສມັຍນີ້ມີລັກສນະທີ່ບໍ່ເປັນຄຣິສຕຽນແລະມີຈິດໃຈຕໍ່ຕ້ານການເປັນຄຣິສຕຽນຫຼາຍຂຶ້ນ. ຄຣິສຕຽນຕ້ອງມີຄວາມນຶກຄິດຈິດໃຈທີ່ແຕກຕ່າງກວ່ານັ້ນອີກ; ຄືຕ້ອງມີຈິດໃຈຂອງພຣະຄຣິດ.

**ການສຶກສາພຣະຄັມພີ**

ພໍ່ແມ່ຂອງຂ້າພະເຈົ້າມັກຈະສົນໃຈໃນຄວາມຄິດຂອງຂ້າພະເຈົ້າໃນເວລາທີ່ຍັງນ້ອຍຢູ່ນັ້ນ. ພວກເພິ່ນມັກຈະຖາມຂ້າພະເຈົ້າຫລາຍໆຄັ້ງວ່າ, “ເຈົ້າກຳລັງຄິດຫຍັງຢູ່?” ແລະ ”ເຈົ້າມີຄວາມຄິດທີ່ຖືກຕ້ອງບໍ່?“ ພໍ່ແມ່ຂອງຂ້າພະເຈົ້າໄດ້ຊ່ວຍໃຫ້ເຂົ້າໃຈວ່າສິ່ງທີ່ເຮົາຄິດຢູ່ຈະເປັນຜົນສະທ້ອນຕໍ່ສິ່ງທີ່ເຮົາກະທຳຢູ່ ແລະກໍຈະເປັນສິ່ງທີ່ນຳທາງໃຫ້ເຮົາກາຍເປັນຄົນແບບນັ້ນໄດ້.

ໃນຂນະທີ່ເຮົາກຳລັງຮຽນບົດຮຽນນີ້, ພວກເຮົາຈະຄົ້ນຄວ້າເພື່ອຈະເຫັນຄວາມແຕກຕ່າງຂອງຄວາມນຶກຄິດຈິດໃຈຂອງຄົນທີ່ມີຄວາມເຊື່ອແລະບໍ່ມີຄວາມເຊື່ອໃນພຣະເຈົ້າ ແລະຄວາມແຕກຕ່າງນັ້ນຈະມີຜົນສະທ້ອນຕໍ່ຊີວິດແບບໃດ. ຈົ່ງຕຽມຕົວສຳຣວດເບິ່ງຄວາມຄິດຂອງຕົນເອງແລະເພື່ອຈະກັບກາຍເປັນຄົນທີ່ມີຄວາມຄິດທີ່ເໝືອນກັນກັບພຣະຄຣິດ

### 1. <u>ເນື້ອໜັງ ກັບ ວິນຍານ</u>: ໂຣມ 8:5-8

ການທີ່ພວກເຮົາຕັ້ງອົກຕັ້ງໃຈໃສ່ກັບສິ່ງໃດສິ່ງນຶ່ງນັ້ນ ຂຶ້ນຢູ່ກັບສິ່ງທີ່ເຮົາຄິດນຳນັ້ນຕລອດວັນ, ແງ່ມຸມທີ່ເຮົາເບິ່ງຊີວິດ, ສິ່ງທີ່ໃຫ້ເຮົາເຫັນຄຸນຄ່າ, ສິ່ງທີ່ຊັກນຳນິສັຍໃຈຄໍ, ແລະວິທີການສະແດງຕົວຂອງເຮົາ. ໃຫ້ເຮົາເຂົ້າໃຈວ່າສນາມຣົບທີ່ຈະຄອບຄອງຊີວິດຂອງເຮົານັ້ນແມ່ນຢູ່ທີ່ຈິດໃຈຂອງເຮົາ. ອາຈານ ໂປໂລ ໄດ້ບອກໃຫ້ເຫັນຄວາມແຕກ

ຕ່າງຂອງຄວາມຄິດຈິດໃຈສອງຝ່າຍທີ່ບໍ່ກົງກັນ--ຄວາມຄິດຈິດໃຈຂອງຝ່າຍເນື້ອໜັງ ແລະຄວາມຄິດຈິດໃຈຝ່າຍຈິດວິນຍານ. ຜູ້ທີ່ມີຈິດໃຈຂອງຝ່າຍເນື້ອໜັງກໍປ່ອຍໃຈໄປຕາມສິ່ງທີ່ດຶງດູດເອົາຊີວິດເດີນຕາມທັມມະຊາດຂອງຄວາມບາບຂອງເຂົາ. ຜູ້ທີ່ມີຈິດໃຈຕັ້ງໄວ້ກັບຝ່າຍວິນຍານກໍເຫັນຊີວິດແບບພຣະເຈົ້າ ແລະກໍຊອກຫາວິທີດໍາເນີນຊີວິດໃນທາງທີ່ພຣະເຈົ້າພໍພຣະທັຍ.

ອາຈານ ໂປໂລ ໄດ້ອະທິບາຍເຖິງຜົນຮັບທີ່ພວກເຮົາຫວັງຈາກຄວາມຄິດສອງທາງທີ່ບໍ່ກົງກັນ; ຕິດຕາມເນື້ອໜັງມີແຕ່ຜົນເສັຍ, ເນື້ອໜັງຕໍ່ຕ້ານກັບການນໍາພາຈາກພຣະເຈົ້າ ແລະນໍາໄປສູ່ຄວາມຕາຍທັງຮ່າງກາຍແລະວິນຍານ. ຕິດຕາມວິນຍານນໍາໄປສູ່ຊີວິດອັນຄົບສົມບູນເວລາທີ່ຍັງມີຊີວິດຢູ່ໃນໂລກນີ້ທີ່ພຣະເຢຊູໄດ້ສັນຍາໄວ້ (ໂຢຮັນ 10:10, ສູ່ຊີວິດອັນຕລອດໄປເປັນນິດ, ແລະສູ່ຄວາມສງົບສຸກກັບພຣະເຈົ້າ.

ພວກເຮົາຕ້ອງເລືອກເອົາຊີວິດທີ່ນໍາດ້ວຍພຣະວິນຍານ ຫລືຈະເດີນໄປຕາມເນື້ອໜັງ. ຜູ້ທີ່ຕັ້ງໃຈເລືອກເອົາຈິດໃຈນໍາພຣະວິນຍານກໍໝົດຄວາມສົນໃຈກັບສິ່ງທີ່ນໍາພາໄປກັບຝ່າຍເນື້ອໜັງ ແລະພວກທີ່ຕັ້ງຈິດໃຈຕິດຕາມສິ່ງທີ່ເປັນຝ່າຍເນື້ອໜັງກໍບໍ່ມີຄວາມສົນໃຈກັບສິ່ງທີ່ຢູ່ຝ່າຍພຣະວິນຍານ--ສິ່ງທີ່ພໍພຣະທັຍຂອງພຣະເຈົ້າ. ຄວາມຈິງ ພວກເຂົາຈະຕ້ານຫລືຕໍ່ສູ້ກັບພຣະເຈົ້າ.

ພວກທີ່ມີຊີວິດຖືກບັນຊາດ້ວຍຝ່າຍເນື້ອໜັງຈະບໍ່ສາມາດເຮັດໃຫ້ພຣະເຈົ້າພໍພຣະທັຍໄດ້ເພາະວ່າເນື້ອໜັງໄດ້ອຸດທິດຕົນເພື່ອຄວາມພໍໃຈຂອງຕົນເອງເທົ່ານັ້ນ. ເໝືອນກັນກັບສັດຮ້າຍ ເນື້ອໜັງຂອງມັນຈະຕ້ອງການແຕ່ອາຫານຕລອດເວລາ. ອາຈານ ໂປໂລ ໄດ້ເຕືອນພວກເຮົາວ່າໃຫ້ຕົວເຮົາຫົ່ມດ້ວຍພຣະຄຣິດ ແລະຢ່າລ້ຽງ ຫລືປ້ອນອາຫານຕາມກິເລດຕັນຫາຂອງເຮົາ (ໂຣມ 13:14). ແຕ່ລະວັນ ພວກເຮົາຕ້ອງເລືອກໃຫ້ຈິດໃຈຂອງເຮົາເຮັດຕາມພຣະວິນຍານ ແລະເອົາຄວາມຢາກແລະການກະທໍາຂອງເຮົາໄວ້ພາຍໃຕ້ການນໍາພາຂອງພຣະອົງ. ພວກເຮົາຕ້ອງເຂົ້າໃຈວ່າວຽກ ຝ່າຍຈິດວິນຍານຂອງພວກເຮົາຕ້ອງກະທໍາທຸກໆວັນ ນັ້ນແມ່ນການຕັດສິນໃຈ.

ຄວາມຮ້ອນໃຈກຽດຊັງພຣະເຈົ້າແມ່ນກຸນແຈຂອງລັກສະນະຈິດໃຈທີ່ມີບາບ. ການສະແດງຄວາມກຽດຊັງນີ້ບາງຄັ້ງໄດ້ສະແດງອອກໃນຄວາມເວົ້າທີ່ບໍ່ສຸພາບ ຫລືບໍ່ມີເຫດຜົນ. ສ່ວນຫລາຍເຮົາຈະເຫັນການສະແດງຢູ່ຕາມສະຖານທີ່ຕ່າງໆດ້ວຍລະຄອນຕລົກ ຫລືຫ້ອງຮຽນໃນມະຫາວິທະຍາລັຍ. ເຖິງຢ່າງໃດກໍຕາມ, ການກຽດຊັງພຣະເຈົ້າມັກຈະສະແດງອອກແບບງຽບໆໃຊ້ຊີວິດແຕ່ລະວັນຕາມແບບຕົວເອງຕ້ອງການ ບໍ່ສົນກັບພຣະເຈົ້າເລີຍ.

## 2. <u>ຕາບອດ ກັບ ເຫັນຮຸ່ງ</u>: 2 ໂກຣິນໂທ 4:3-4

ອາຈານ ໂປໂລ ປລາດໃຈທີ່ພຣະເຈົ້າເລືອກເອົາເພິ່ນໃຫ້ໄປບອກຄົນອື່ນກ່ຽວກັບພຣະເຢຊູ. ທ່ານຮູ້ວ່າດ້ວຍພຣະກາຣຸນາຂອງພຣະເຈົ້າທີ່ທ່ານເອງຖືກຮຽກເອີ້ນໄປເທສນາພຣະຄໍາຂອງພຣະເຈົ້າ. ທ່ານຍັງໄດ້ເວົ້າວ່າຂ່າວຂອງໄມ້ກາງແຂນນັ້ນເປັນສິ່ງທີ່ໂງ່ສໍາລັບຜູ້ທີ່ກໍາລັງຈິບຫາຍໄປ (1 ກຣທ 1:18). ສ□າລັບຄົນທີ່ບໍ່ເຊື່ອ ໄມ້ກາງແຂນເປັນຕໍໃຫ້ເຂົາສະດຸດ ແລະຄົນອື່ນກໍເປັນພຽງສິ່ງທີ່ໂງ່ເທົ່ານັ້ນ.

ເຖິງແມ່ນວ່າຂ່າວທີ່ອາຈານໂປໂລກ່າວນັ້ນທ່ານເວົ້າແບບແຈ້ງໆແລະຊື່ໆ ກໍຍັງເປັນສິ່ງທີ່ມືດຫລືປິດບັງສໍາລັບຜູ້ທີ່ບໍ່ເຊື່ອໃນພຣະຄຣິດ. ອາຈານໂປໂລໄດ້ວາດພາບເຖິງສະພາບຂອງອາການຕາບອດ ເພື່ອອະທິບາຍເຖິງສະພາບຂອງຝ່າຍຈິດວິນຍານຂອງຄົນທີ່ບໍ່ເຊື່ອ, ຜູ້ທີ່ບໍ່ສາມາດເຂົ້າໃຈ ຫລືບໍ່ຕ້ອງການເຂົ້າໃຈໃນຄວາມຈິງ. ແນ່ນອນ ແມ່ນຊາຕານເອງເປັນຜູ້ຮັບຜິດຊອບໃນການປົກບັງຂ່າວຂອງໄມ້ກາງແຂນ ແລະເຮັດໃຫ້ຄົນທີ່ບໍ່ເຊື່ອຕາມືດໄປ. ຜູ້ທີ່ມີຈິດໃຈຖືກປົກບັງດ້ວຍຊາຕານນັ້ນບໍ່ສາມາດຄິດຢ່າງຖືກຕ້ອງ, ລາວຈະຕໍ່ຕ້ານຄວາມຈິງຂອງພຣະເຈົ້າ ແລະຕົກເປັນເຫຍື່ອຂອງຂ່າວທີ່ບໍ່ມີຄວາມຈິງໄດ້ງ່າຍ.

ຊາຕານຊອກຫາທີ່ຈະບັງຕາຂອງຜູ້ທີ່ບໍ່ເຊື່ອນັ້ນຈາກແສງສວ່າງຂອງພຣະຄໍາ. ໃນຖານະທີ່ມັນເປັນພຣະເຈົ້າຂອງສມັຍນີ້ (ພຣະເຈົ້າຂອງຄົນທີ່ໃຊ້ຊີວິດໄປຕາມໂລກແຫ່ງຄວາມບາບ), ຊາຕານຊອກຫາວິທີທາງທີ່ຈະຕັນປະຕູຂອງຄວາມສວ່າງບໍ່ໃຫ້ນໍາໄປເຖິງຈິດໃຈຄວາມນຶກຄິດທີ່ມີຄວາມມືດ. ຊາຕານບໍ່ຕ້ອງການໃຫ້ມະນຸດເຫັນແລະເຂົ້າໃຈໃນຄວາມຈໍາເປັນຂອງວິນຍານຈິດທີ່ຕົວເອງກໍາລັງຈະຕາຍ ແລະຕ້ອງການຄວາມພົ້ນທາງພຣະເຢຊູຄຣິດ.

ຊາຕານ ເຈົ້າແຫ່ງຄວາມມືດ (ອຟຊ 6:12), ໄດ້ປອມແປງຕົວເອງເປັນເທວະດາແຫ່ງຄວາມສວ່າງ (2 ກຣທ 11:14). ອາຈານໂປໂລໄດ້ເຕືອນກ່ຽວກັບພວກທີ່ຫລອກລວງ ເທດສນາຍົວະເຍົ້າກ່ຽວກັບພຣະເຢຊູອົງອື່ນ(ພຣະເຢຊູປອມ) ແລະພຣະຄໍາປອມ (2 ກຣທ 11:4). ອາຈານໂປໂລໄດ້ເອົາພຣະເຢຊູເປັນຈຸດສໍາຄັນໃນການເທດສນາຂອງທ່ານ (2 ກຣທ 4:5). ພຣະເຢຊູຍິ່ງໃຫຍ່ທີ່ສຸດ, ເປັນແສງສວ່າງຂອງໂລກ ແລະເປັນຢາຊະນິດດຽວທີ່ຈະປິ່ນປົວຄວາມມືດຂອງຈິດວິນຍານ. ພວກເຮົາຕ້ອງແບ່ງປັນຂ່າວປະເສີດກ່ຽວກັບພຣະເຢຊູຕາມການນໍາພາຂອງພຣະວິນຍານບໍຣິສຸດ ຜູ້ທໍາການສູ້ຮົບກັບຊາຕານດ້ວຍການເປີດເຜີຍຄວາມຈິງໃນພຣະຄໍາພຣະເຈົ້າ.

### 3. <u>ຄວາມສລາດຂອງມະນຸດ ກັບ ຄວາມຄິດຈິດໃຈຂອງພຣະຄຣິດ</u>: 1 ໂກຣິນໂທ 2:12-16

ໂລກບໍ່ເຂົ້າໃຈໄມ້ກາງແຂນ-ເຄື່ອງໝາຍອັນສັກສິດຂອງພຣະເຈົ້າ. ພວກທີ່ເບິ່ງໂລກໃນແງ່ຮ້າຍ, ນັກປຣັສຍາ, ແລະພວກອື່ນໆທີ່ຜ່ານມາຕາມສມັຍຕ່າງໆໃນປະວັດສາດໂລກໄດ້ພຍາຍາມລົບລ້າງເອົາການທໍາງານຂອງໄມ້ກາງ ແຂນອອກຈາກພຣະເຢຊູ. ເຖິງແມ່ນໜັງສືໂຄຣານກໍຍັງບອກວ່າ ພຣະເຢຊູບໍ່ໄດ້ຖືກຄຶງ (ຊູຣາ 4:157). ຖ້າວ່າພຣະເຢຊູບໍ່ໄດ້ຖືກຄຶງ, ບໍ່ໄດ້ກັບຄືນຂຶ້ນມາຈາກຕາຍ, ຄວາມເຊື່ອຂອງເຮົາກໍໄຮ້ປໂຍດ (1 ກຣທ 15:14).

ເວລາທີ່ອາຈານໂປໂລມາເຖິງເມືອງໂກຣິນໂທ, ທ່ານຕັ້ງໃຈວ່າຈະບໍ່ປະກາດເຣື່ອງໃດໆໃຫ້ແກ່ຊາວໂກຣິນໂທ ”ນອກຈາກເຣື່ອງຂອງພຣະເຢຊູຄຣິດ ແລະພຣະອົງຖືກຄຶງເທົ່ານັ້ນ“. ທ່ານເທດສນາເຣື່ອງໄມ້ກາງແຂນແບບງ່າຍໆ ແລະແຈ່ມແຈ້ງດ້ວຍອາສັຍພຣະວິນຍານບໍຣິສຸດ. ອາຈານໂປໂລຕ້ອງການໃຫ້ຜູ້ຟັງເອົາໃຈຈິດຈໍ່ໃສ່ພຣະຄຣິດແລະການຊົງໄຖ່ຂອງພຣະອົງເທິງໄມ້ກາງແຂນ.

ອາຈານໂປໂລໄດ້ບອກກັບຊາວໂກຣິນໂທວ່າຜູ້ທີ່ອາສັຍວິນຍານຂອງໂລກຫລືຄວາມສລາດຂອງມະນຸດນັ້ນບໍ່ສາມາດຢັ່ງຮູ້ສິ່ງທີ່ພຣະເຈົ້າໄດ້ປະທານຢ່າງຟຣີໆ ໃຫ້ແກ່ພວກເຂົາ--ຄວາມພົ້ນດ້ວຍພຣະຄຸນທາງຄວາມເຊື່ອໃນພຣະເຢຊູຄຣິດເຈົ້າ. ເວລາອາຈານໂປໂລເວົ້າເຖິງພຣະເຢຊູ ທ່ານບໍ່ໄດ້ໃຊ້ຄໍາເວົ້າສອນດ້ວຍປັນຍາຂອງມະນຸດ ເພາະວ່າຄໍາເວົ້າເຫລົ່ານີ້ມັນບໍ່ຄ່ອງແຄ້ວທີ່ຈະໃຊ້ອະທິບາຍເຖິງປັນຍາຂອງພຣະເຈົ້າ. ທ່ານໃຊ້ພາສາຂອງພຣະວິນຍານ--ຄໍາເວົ້າຝ່າຍວິນຍານ--ເພື່ອອະທິບາຍຄວາມຈິງທີ່ເປັນຝ່າຍວິນຍານ.

ຫຼາຍຄົນທີ່ໄດ້ຍິນຂ່າວຈາກອາຈານໂປໂລ ພວກເຂົາຄິດວ່າເປັນສິ່ງທີ່ງົມງາຍ, ນັ້ນເປັນຍ້ອນວ່າເຂົາເປັນຄົນທັມມະດາ ຫຼືຜູ້ທີ່ບໍ່ແມ່ນຄຣິສຕຽນກໍເລີຍບໍ່ສາມາດເຂົ້າໃຈຄວາມຈິງໃນພຣະເຈົ້າ. ກ່ອນຂ້າພະເຈົ້າກາຍເປັນຄຣິສຕຽນ, ຊາຍໜຸ່ມຄົນນຶ່ງທີ່ເຂົ້າໂຮງຮຽນມັທຍົມນໍາກັນໄດ້ເວົ້າຄວາມເຊື່ອຄຣິສຕຽນຂອງລາວໃຫ້ຂ້າພະເຈົ້າຟັງ. ຂ້າພະເຈົ້າບໍ່ເຂົ້າໃຈວ່າເປັນຫຍັງລາວຈຶ່ງເຊື່ອແລະໃຊ້ຊີວິດແບບນັ້ນ. ຕໍ່ມາ, ເມື່ອຂ້າພະເຈົ້າກາຍເປັນຄຣິສຕຽນແລ້ວ ຂ້າພະເຈົ້າຈຶ່ງເຂົ້າໃຈໃນສິ່ງທີ່ລາວໄດ້ເວົ້າສູ່ຟັງ. ພຣະວິນຍານບໍຣິສຸດຂອງພຣະເຈົ້າ ທີ່ສະຖິດຢູ່ນໍາຜູ້ທີ່ເຊື່ອນັ້ນ ໄດ້ຊ່ວຍຄວາມເຂົ້າໃຈຂອງຂ້າພະເຈົ້າ. ພຣະວິນຍານໄດ້ຊ່ວຍໃຫ້ຂ້າພະເຈົ້າເຂົ້າໃຈຂ່າວກ່ຽວກັບໄມ້ກາງແຂນແຈ້ງຂຶ້ນ.

ອາຈານໂປໂລ ເວົ້າວ່າຄຣິສຕຽນມີຄວາມຄິດຈິດໃຈເໝືອນກັບພຣະຄຣິດ, ພຣະຄຣິດເປັນພື້ນຖານແລະຄວາມໝາຍໃນການເຂົ້າໃຈແລະແປຄວາມໝາຍໃນຊີວິດ. ການມີຄວາມຄິດຈິດໃຈເໝືອນພຣະຄຣິດມີຜົນສະທ້ອນຕໍ່ວິທີຄວາມຄິດແລະໃຊ້ຊີວິດການເປັນຢູ່ ແລະຊ່ວຍຜູ້ທີ່ເຊື່ອໃຫ້ເຂົ້າໃຈຊີວິດການເປັນຢູ່ແບບໄປຕາມຄວາມເຫັນຂອງ

ພຣະຄຣິດ.   ເຖິງຢ່າງໃດກໍຕາມ, ຖ້າເຮົາຢາກມີຈິດໃຈເໝືອນພຣະຄຣິດ ພວກເຮົາຕ້ອງໃຊ້ເວລາຢູ່ກັບພຣະອົງແລະພຣະຄຳຢ່າງສມ່ຳສເມີ, ຍອມໃຫ້ພຣະວິນຍານບໍຣິສຸດເປັນຜູ້ນຳພາພວກເຮົາ.

ຜູ້ທີ່ເຊື່ອຄວນຊອກສແວງຫາ ແລະວາງໃຈໃນສະຕິປັນຍາຂອງພຣະເຈົ້າຕາມທີ່ກ່າວໄວ້ໃນພຣະຄັມພີ.  ສຳລັບຜູ້ເຊື່ອ, ການໃຊ້ເວລາຮ່ຳຮຽນພຣະຄັມພີແບບສ່ວນຕົວແລະເປັນກຸ່ມນັ້ນແມ່ນຈະຫລີກເວັ້ນບໍ່ໄດ້. ການທີ່ກາຍເປັນຜູ້ທີ່ສາມາດເຂົ້າໃຈເລິກເຊິ່ງໃນຝ່າຍວິນຍານນັ້ນຕ້ອງໃຊ້ເວລາ,   ພຣະວິນຍານບໍຣິສຸດເປັນບໍ່ເກີດແຫ່ງຄວາມເຂົ້າໃຈຝ່າຍວິນຍານ.  ມີແຕ່ຄົນທີ່ພຣະວິນຍານຊົງສອນເທົ່ານັ້ນທີ່ສາມາດເຂົ້າໃຈຄວາມຈິງຂອງຝ່າຍວິນຍານ (ຢຮ 14:26; 16:13).   ຜູ້ທີ່ພຣະວິນຍານຊົງນຳພາມີຄວາມຄິດຈິດໃຈເໝືອນພຣະຄຣິດ, ເຫດສະນັ້ນ ຖ້າພວກເຮົາຕ້ອງການໃຫ້ມີຄວາມຄິດຈິດໃຈເໝືອນພຣະຄຣິດ ເຮົາຕ້ອງເປີດພຣະຄັມພີຫລາຍກວ່າເກົ່າອີກ.   ພວກເຮົາຕ້ອງຕັ້ງໃຈຮ່ຳຮຽນແລະທູນຂໍໃຫ້ພຣະເຈົ້າເປີດຕາຂອງເຮົາໃຫ້ເຫັນສິ່ງອັສຈັນທີ່ມີຢູ່ໃນພຣະຄຳຂອງພຣະອົງ (ພສສ 119:18).

## ບົດຮຽນຊີວິດ:

ພຣະເຢຊູຊົງສອນວ່າພວກເຮົາຕ້ອງຮັກພຣະເຈົ້າຫລາຍກວ່າຄວາມຮູ້ສຶກ;   ພວກເຮົາຕ້ອງຮັກພຣະອົງດ້ວຍຈິດໃຈອັນສລາດ (ມທ 22:37).  ຄຣິສຕຽນຈະມີຈິດໃຈອ່ອນແອຢູ່ໃນສັງຄົມທີ່ເຕັມໄປດ້ວຍຄວາມກຽດຊັງຄຣິສຕຽນນີ້ບໍ່ໄດ້.  ພວກເຮົາຕ້ອງມີຄວາມສາມາດເວົ້າຢ່າງສລາດສລຽວກ່ຽວກັບຄວາມເຊື່ອຂອງເຮົາ ແລະການສະແດງຕົວ ຂອງເຮົາຕ້ອງສະແດງໃຫ້ເຫັນວ່າພວກເຮົາຄິດເໝືອນພຣະຄຣິດ ບໍ່ເໝືອນປະເພນີຫລືຕາມປະເພນີ.

ຕໍ່ໄປນີ້ແມ່ນວິທີບາງຢ່າງທີ່ຊີ້ໃຫ້ເຫັນວ່າພວກເຮົາມີຄວາມຄິດທີ່ຖືກຕ້ອງ:

1. ອ່ານພຣະຄັມພີທຸກໆວັນ.  ຝຶກແອບຕົນເອງເລົ່າຂໍ້ພຣະຄັມພີ  ວິທີດຽວທີ່ຈະຄິດເໝືອນພຣະເຢຊູ ຄືໃຫ້ຮູ້ຈັກສິ່ງທີ່ພຣະອົງເວົ້າ ແລະວິທີທີ່ພຣະອົງໃຊ້ຊີວິດ.
2. ບໍ່ຕ້ອງຢ້ານກົວຕໍ່ຄຳຕຳໜິຂອງຄວາມຄິດຂອງໂລກ.  ໃຫ້ໃຊ້ເວລາຄົ້ນຄວ້າຫາເຫດຜົນແລະຄວາມຄິດທີ່ພາໃຫ້ຄົນອື່ນຕໍ່ຕ້ານຄຣິສຕຽນ ແລະຕຽມພ້ອມຊອກຫາວິທີທາງທີ່ຈະຕອບຮັບເຂົາເຈົ້າ.
3. ລະວັງ ຈົ່ງປ້ອງກັນຈິດໃຈຂອງເຮົາຕໍ່ຄວາມຍົວະເຍົ້າຂອງຜີມານຊາຕານ.  ຢ່າປ່ອຍໃຫ້ຈິດໃຈຂອງເຮົາເປື້ອນເປິ້ອຍສິ່ງທີ່ເຮັດໃຫ້ຄວາມຮັກໃນພຣະເຈົ້າຂອງເຮົານັ້ນເຢັນລົງ.
4. ຈົ່ງສແວງຫາຄວາມບໍຣິສຸດ.  ໃຫ້ທຳງານຫລາຍກວ່າປ້ອງກັນຄວາມເຊື່ອ--ໃຊ້ຊີວິດຢູ່ໃນຄວາມເຊື່ອ.  ໃຊ້ຊີວິດທີ່ຄົນທັງຫລາຍຖາມຫາສິ່ງດີໆກ່ຽວກັບພຣະເຈົ້າ.
5. ເວົ້າກັບຄົນອື່ນກ່ຽວກັບພຣະເຢຊູ ແລະພຣະອົງເປັນຜູ້ທີ່ມີຄວາມອັສຈັນຫລາຍ.   ເຮັດໃຫ້ພຣະອົງເປັນເປົ້າສຳຄັນທີ່ສຸດໃນຊີວິດຂອງທ່ານແລະການສົນທະນາຂອງທ່ານ.

ພວກເຮົາຕ້ອງໃຫ້ຫົວໃຈອ່ອນນ້ອມທີ່ເຕັມໄປດ້ວຍຄວາມຮັກນຳພາຈິດໃຈຂອງເຮົາ ໃຫ້ຕຽມພ້ອມສເມີເພື່ອຈະຜູກພັນກັບຄົນໃນຍຸກສມັຍທີ່ເຕັມໄປດ້ວຍການເຫັນທຸກໆສິ່ງໃນແງ່ຮ້າຍໃນໂລກນີ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org  ໂດຍ  BS